ฟອຣ์ມຄຳຮ້ອງຂອງຂ້າພະເຈົ້າຈະຖືກກວດສອບຫລືບໍ່ ? ອາດຈະມີການກວດສອບເປັ່ງ ໃນເວລາໃດກໍ່ໄດ້ໃນລະວ່າງປີການສຶກສາ ວ່າທ່ານມີສິດໄດ້ຮັບຜົນປະໂຍດດ້ານອາຫານນີ້ຫລືບໍ່ ທາງເຈົ້າໜ້າທີ່ຂອງໂຮງຮຽນອາດຈະຂໍໃຫ້ທ່ານສົ່ງຫລັກຖານ ເປັນລາຍລັກອັກສອນທີ່ສະແດງວ່າລູກຂອງ ທ່ານຄວນຈະໄດ້ກິນອາຫານຟຣີ ຫລືອາຫານຫລຸດຣາຄາຢູ່ໂຮງຮຽນ.

ຂ້າພະເຈົ້າສາມາດອຸທອນຄຳຕັດສິນຂອງໂຮງຮຽນໄດ້ຫລືບໍ່ ? ທ່ານສາມາດໄປໂອ້ລົມກັບເຈົ້າໜ້າທີ່ໂຮງຮຽນໄດ້ ຖ້າຫາກว่าທ່ານບໍ່ເຫັນພ້ອມນຳ ການຕັດສິນຂອງໂຮງຮຽນກ່ຽວກັບຄຳຮ້ອງຂອງທ່ານນັ້ນ. ນອກນີ້ທ່ານຍັງສາມາດຮ້ອງຂໍໃຫ້ມີການພິຈາລະນາຄຳອຸທອນຂອງທ່ານຢ່າງຍຸຕິທັນ ໂດຍການໂທລະສັບເຖິງ ຫລືຂຽນຈົດໝາຍເຖິງທ່ານ:

_____ ໂທລະສັບ _____

ທີ່ຢູ່ _____

ຂ້າພະເຈົ້າຈະຕ້ອງລາຍງານການປ່ຽນແປງໃດງຫລືບໍ່ ? ຖ້າຫາກว่าລູກຂອງທ່ານໄດ້ກິນອາຫານຟຣີ ຫລືອາຫານຫລຸດຣາຄາ ຍ້ອນລາຍໄດ້ຂອງທ່ານຕ່ຳ ທ່ານຈະຕ້ອງແຈ້ງໃຫ້ພວກເຮົາຊາບຖ້າຫາກว่าຈຳນວນສມາຊິກໃນຄອບຄົວຂອງທ່ານລຸດໜ້ອຍລົງ ຫລືຖ້າຫາກว่าລາຍໄດ້ຂອງທ່ານເພີ້ມຂຶ້ນ ຫລາຍກว่า $50 ຕໍ່ເດືອນ ຫລື $600 ຕໍ່ປີ. ຖ້າຫາກว่าລູກຂອງທ່ານໄດ້ກິນ ອາຫານຟຣີ. ຍ້ອນว่าຄອບຄົວຂອງທ່ານໄດ້ຮັບການຊ່ວຍເຫລືອ ດ້ານຟູດສະແຕມ,**TANF** ຫລື **FDPIR** ທ່ານຈະຕ້ອງແຈ້ງໃຫ້ພວກ ເຮົາຊາບ ເວລາໃດທີ່ທ່ານ ບໍ່ໄດ້ຮັບການຊ່ວຍເຫລືອ ຫລືຜົນປະໂຍດເຫລົ່ານັ້ນແລ້ວ.

ຂໍ້ມູນໃນຟອຣ์ມຄຳຮ້ອງຂອງຂ້າພະເຈົ້າຈະຖືກຮັກສາໄວ້ເປັນຄວາມລັບບໍ່ ? ພວກເຮົາຈະນຳໃຊ້ຂໍ້ມູນໃນຟອຣ์ມຄຳຮ້ອງຂອງທ່ານເພື່ອຕັດສິນว่าລູກຂອງທ່ານຄວນຈະໄດ້ກິນອາຫານຟຣີ ຫລືອາຫານຫລຸດຣາຄາຫລືບໍ່ ພວກເຮົາອາດຈະລາຍງານ ຂໍ້ມູນໃນຟອຣ์ມຂອງທ່ານໃຫ້ທາງເຈົ້າໜ້າທີ່ ທີ່ພົວພັນກັບໂຄງການອາຫານບຳລຸງເດັກ ໂຄງການອະນາໄມ ຫລືໂຄງການສຶກສາຊາບເພື່ອຕັດສິນว่าລູກຂອງທ່ານມີສິດຈະໄດ້ຮັບຜົນປະໂຍດຈາກໂຄງການເຫລົ່ານັ້ນຫລືບໍ່ ຫລືເພື່ອເປົ້າໝາຍໃນການຮ້ອງຂໍທຶນ ສຳຫລັບໂຄງການເຫລົ່ານັ້ນ ແລະເພື່ອເປົ້າໝາຍໃນການຕີຣາຄາປະສິດທິຜົນຂອງໂຄງການເຫລົ່ານັ້ນ.

ຂ້າພະເຈົ້າສາມາດຍື່ນຄຳຮ້ອງຂໍອາຫານຟຣີ ຫລືອາຫານຫລຸດຣາຄາໃນພາຍຫລັງໄດ້ບໍ່ ?
ທ່ານສາມາດຍື່ນຄຳຮ້ອງຂໍອາຫານຟຣີ ຫລືອາຫານຫລຸດຣາຄາໄດ້ໃນທຸກເວລາລະວ່າງປີການສຶກສາ, ຖ້າຫາກว่าທ່ານບໍ່ມີເງື່ອນໄຂຖືກຕ້ອງໃນເວລານີ້ ແຕ່ຫາກມີການປ່ຽນແປງສຖານການໃນເວລາຕໍ່ໄປ ເຊັ່ນລາຍໄດ້ຂອງຄອບຄົວຫລຸດລົງ ຈຳນວນສມາຊິກໃນຄອບຄົວມີການว่างງານ ຫລືໄດ້ຮັບຟູດສະແຕມ ຫລືການຊ່ວຍເຫລືອ **TANF** ຫລື **FDPIR** ເປັນຕົ້ນ ທ່ານກໍ່ສາມາດຍື່ນຄຳຮ້ອງໄດ້ໃນເວລານັ້ນ.

ແລ້ວພວກເຮົາຈະແຈ້ງໃຫ້ທ່ານຊາບว่า ຄຳຮ້ອງຂອງທ່ານໄດ້ຮັບ ການອະນຸມັດ ຫລື ປະຕິເສດ.

ດ້ວຍຄວາມຈິງໃຈ,